ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ອົງການອະທິໄອຍະການ</u> /ລກທີ່ 14 /ອທກ.

<u>ປະຊາຊົນແຫ່ງ ສປປລ.</u>

<u>ຄຳ ສັ່ງ ແນະ ນຳ</u>

ເຖິງ ບັນດາໄອຍະການປະຊາຊົນແຂວງ, ກຳແພງນະຄອນແລະເມືອງ

ໃນທົ່ວປະເທດ.

<u>ເລື່ອງ</u>: ການປ່ອຍຕົວຜູ້ຖືກຫາແລະນັກໂທດ.

ອີງຕາມພາລະບົດບາດແລະຫນ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດຫມາຍຊຶ່ງກຳນົດໄວ້ໃນກົດຫມາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະກົດຫມາຍດຳເນີນຄະດີອາຍາ(ມາດຕາ 80)ແມ່ນໄອຍະການປະຊາຊົນເປັນຜູ້ອອກຄຳສັ່ງໃຫ້ປ່ອຍຕົວນັກໂທດທີ່ໄດ້ປະຕິບັດໂທດຄົບແລ້ວຫລືຖືກປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂຕາມຄຳຕັດສິນຂອງສານ. ໃນກໍລະນີທີ່ສານຕັດສິນໃຫ້ຈຳເລີຍພົ້ນຂໍ້ກ່າວຫາກໍ່ແມ່ນຫນ້າທີ່ຂອງໄອຍະການປະຊາຊົນເປັນຜູ້ອອກຄຳສັ່ງປ່ອຍຕົວຈຳເລີຍ ໂດຍປະຕິບັດຕາມຄຳຕັດສິນຂອງສານນັ້ນ .

ວຽງຈັນ, ວັນທີ່ 30 ພະຈິກ 1992

ອະທິໄອຍະການປະຊາຊົນ

ພາຍ ຊູລາ